**ສາທາລະນະລັດປະຊາທິປະໄຕປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

=====000=====

ກະຊວງສາທາລະນະສຸກ

ກອງເລຂາຄະນະກຳມະການປະສານງານ

ກອງທຶນໂລກຕ້ານເອດ, ວັນນະໂຣກ ແລະ ໄຂ້ຍຸງ

ສປປ ລາວ

## ບົດບັນທຶກກອງປະຊຸມຄະນະກຳມະການປະສານງານກອງທຶນໂລກ

ກອງປະຊຸມຄະນະກຳມະການປະສານງານກອງທຶນໂລກ (ຄປກທລ) ແມ່ນຈະໄດ້ຈັດຂຶ້ນທຸກໆ 3 ເດືອນເພື່ອປຶກສາຫາລື, ຮັບຟັງການລາຍງານຄວາມຄືບໜ້າຂອງການຈັດຕັ້ງປະຕິບັດເງິນຊ່ວຍເຫຼືອໃນຮອບປະຈຸບັນ, ການຮັບຮອງ, ແລະ ການຕັດສິນບັນຫາຕ່າງໆກ່ຽວກັບການຈັດຕັ້ງປະຕິບັດວຽກງານໂຄງການຂອງກອງທຶນໂລກ. ກອງປະຊຸມຄັ້ງນີ້ ໄດ້ຈັດຂຶ້ນໂດຍການເປັນປະທານຂອງ ທ່ານ ຮສ. ດຣ. ພູທອນ ເມືອງປາກ, ຮອງລັດຖະມົນຕີກະຊວງສາທາລະນະສຸກ ທັງເປັນປະທານຄະນະກຳມະການປະສານງານກອງທຶນໂລກ.

**I. ວັນເວລາ:** ວັນພະຫັດ, ທີ 26 ກໍລະກົດ 2018, ເວລາ 13:50 ເຖິງ 17:15.

**II. ສະຖານທີ່:** ຫ້ອງປະຊຸມທີ່ຊັ້ນ 3, ກະຊວງສາທາລະນະສຸກ.

**III. ຜູ້ເຂົ້າຮ່ວມ:** ສະມາຊິກສົມບູນ ແລະ ສຳຮອງ ຈຳນວນ 19 ທ່ານ (ມີສິດອອກສຽງໄດ້ 17 ທ່ານ), ພາກສ່ວນອື່ນໆ ຈຳນວນ 20 ທ່ານ, ກອງເລຂາ ຄປກທລ ຈຳນວນ 04 ທ່ານ ລວມທັງໝົດ 43 ທ່ານ.

**IV. ວາລະກອງປະຊຸມ:**

1. ທົບທວນ ແລະ ຮັບຮອງເອົາຮ່າງບົດສະເໜີຂໍທຶນຈາກກອງທຶນໂລກ ເພື່ອສະໜັບສະໜູນການຂະຫຍາຍວຽກງານບໍລິການທີ່ຍືນຍົງໃນກຸ່ມປະຊາກອນເປົ້າໝາຍໃນພາກພື້ນອາຊີຕາເວັນອອກສຽງເໜືອ;
2. ລາຍງານຜົນການຢ້ຽມຢາມ ສປປ ລາວ ຄັ້ງທຳອິດ ຂອງທ່ານ ນາງ Elin Bos ຜູ້ຈັດການກອງທຶນຂອງກອງທຶນໂລກ;
3. ລາຍງານຜົນຂອງການລົງຕິດຕາມຊຸກຍູ້ການປະຕິບັດວຽກງານຢູ່ແຂວງຫຼວງພະບາງ ລະຫວ່າງວັນທີ 26-29 ມິຖຸນາ 2018;
4. ສະເໜີຄວາມຄືບໜ້າ ແລະ ບັນຫາ ທີ່ສຳຄັນກ່ຽວກັບວຽກງານການບໍລິຫານຄຸ້ມຄອງໂຄງການ ໂດຍສະເພາະກົນໄກການໄຫຼວຽນຂອງເງິນຊ່ວຍເຫຼືອ ແລະ ຂັ້ນຕອນການຍົກເວັ້ນພາສີ;
5. ການຄັດເລືອກເອົາຜູ້ຮັບທຶນຮ່ວມພາຍໃນປະເທດ ຂອງທຶນຊ່ວຍເຫຼືອໂຄງການພາກພື້ນວັນນະໂຣກ;
6. ສະເໜີການປະຕິບັດກິດຈະກຳຂອງຄະນະກຳມະການປະສານງານຂອງອົງການຈັດຕັ້ງທາງສັງຄົມ (NPA-KAP-PLWD CC);
7. ການຊ່ວຍເຫຼືອດ້ານວິຊາການຈາກ USAID ໂດຍຜ່ານໂຄງການ Health Policy Plus on National Transition Plan and Social Contract.

V. ການສະຫຼຸບສັງລວມໂດຍຫຍໍ້ກ່ຽວກັບເນື້ອໃນທີ່ໄດ້ປຶກສາຫາລື:

1. ທົບທວນ ແລະ ຮັບຮອງເອົາຮ່າງບົດສະເໜີຂໍທຶນຈາກກອງທຶນໂລກ ເພື່ອສະໜັບສະໜູນການຂະຫຍາຍວຽກງານບໍລິການທີ່ຍືນຍົງໃນກຸ່ມປະຊາກອນເປົ້າໝາຍໃນພາກພື້ນອາຊີຕາເວັນອອກສຽງເໜືອ:
   - ອົງການ AFAO ໄດ້ຮັບການຄັດເລືອກເປັນ PR ພາກພື້ນ ໂດຍມີຫ້ອງການປະຈຳຢູ່ບາງກອກ, ອົງການດັ່ງກ່າວນີ້ຈະຮ່ວມມືກັບ WHO ແລະ UNAIDS ຮ່າງກົນໄກການຄຸ້ມຄອງເງິນຊ່ວຍເຫຼືອ ແລ້ວຈະສົ່ງໃຫ້ CCM ເພື່ອມີຄຳເຫັນ;
   - ງົບປະມານທັງໝົດຂອງຮ່າງບົດສະເໜີຂໍທຶນນີ້ແມ່ນ 932,000ໂດລາ ສຳລັບເຈັດຊົງເຂດກິດຈະກຳທີ່ເປັນບຸລິມະສິດ ແຕ່ເມື່ອທາງຜູ້ຮັບຜິດຊອບທີ່ບາງກອກໄດ້ທົບທວນແລ້ວ ໄດ້ຕັດງົບປະມານລົງເຫຼືອ 680,000ໂດລາ ຊຶ່ງງົບປະມານດັ່ງກ່າວນີ້ ແມ່ນຍັງບໍ່ທັນໄດ້ອະນຸມັດຈາກກອງທຶນໂລກເທື່ອ;
   - ສ່ວນຄ່າໃຊ້ຈ່າຍບໍລິຫານ ແລະ ຊັບພະຍາກອນມະນຸດ ແມ່ນຍັງບໍ່ທັນໄດ້ຍົກຂຶ້ນມາປຶກສາຫາລືກັນເທື່ອໃນກອງປະຊຸມຄັ້ງຜ່ານມາທີ່ບາງກອກ ແລະ ກອງປະຊຸມດັ່ງກ່າວນີ້ ໄດ້ສຸມໃສ່ແຕ່ການປຶກສາຫາລືເລື່ອງກິດຈະກຳຂອງໂຄງການ ໂດຍເນັ້ນໄປທີ່ ຄວາມຍືນຍົງ, ຄວາມເປັນໄປໄດ້ ແລະ ຜົນໄດ້ຮັບຂອງກິດຈະກຳ ເທົ່ານັ້ນ;
   - ສ່ວນ SR ຂອງເງິນຊ່ວຍເຫຼືອດັ່ງກ່າວນີ້ ທາງກອງປະຊຸມໄດ້ສະເໜີໃຊ້ກົນໄກເກົ່າທີ່ມີຢູ່ ແລະ ການເບີກຈ່າຍເງິນຂອງໂຄງການດັ່ງກ່າວນີ້ ແມ່ນຈະຕ້ອງໄດ້ປະຕິບັດຕາມກົນໄກການໄຫຼວຽນເງິນຊ່ວຍເຫຼືອຂອງກະຊວງການເງິນ ແລະ ບັນຫາດັ່ງກ່າວນີ້ ແມ່ນຈະຕ້ອງໄດ້ນຳໄປປຶກສາຫາລືກັບຜູ້ຮັບຜິດຊອບວຽກງານທີ່ບາງກອກ ແລະ ກອງທຶນໂລກ ອີກເທື່ອໜຶ່ງ;
   - ກອງປະຊຸມໄດ້ຕົກລົງໂດຍຫຼັກການເຫັນດີເປັນເອກະພາບກັນໃນການຮັບຮອງເອົາຮ່າງບົດສະເໜີຂໍທຶນດັ່ງກ່າວນີ້ - ຊຶ່ງໄດ້ມອບໝາຍໜ້າວຽກໃຫ້ CHAS ແລະ UNAIDS ເຮັດວຽກຮ່ວມກັນກັບພາກສ່ວນທີ່ກ່ຽວຂ້ອງເພື່ອເຈລະຈາຕໍ່ລອງກັບຝ່າຍຜູ້ຮັບຜິດຊອບທີ່ບາງກອກ ແກ້ໄຂບັນຫາຕ່າງໆທີ່ໄດ້ກ່າວມາຂ້າງເທິງນັ້ນ.
2. ລາຍງານຜົນການຢ້ຽມຢາມ ສປປ ລາວ ຄັ້ງທຳອິດ ຂອງທ່ານ ນາງ Elin Bos ຜູ້ຈັດການກອງທຶນຂອງກອງທຶນໂລກ:
   - ກະຊວງສາທາລະນະສຸກໄດ້ຮ່າງໜັງສືກ່ຽວກັບກົນໄກການໄຫຼວຽນຂອງເງິນຊ່ວຍເຫຼືອແລ້ວ ເພື່ອສົ່ງໃຫ້ທາງກອງທຶນໂລກພິຈາລະນາ ແລະ ຮັບຮອງເອົາ;
   - ສ່ວນກົນໄກການໄຫຼວຽນຂອງເງິນຊ່ວຍເຫຼືອ ແລະ ຂັ້ນຕອນການຍົກເວັ້ນພາສີ ແມ່ນທາງກະຊວງສາທາລະນະສຸກໄດ້ປຶກສາຫາລື ແລະ ຕົກລົງເປັນເອກະພາບກັນ ກັບທາງກະຊວງການເງິນແລ້ວ ແລະ PMU ຈະສົ່ງບົດບັນທຶກຂໍ້ຕົກລົງ ແລະ ເອກະສານທີ່ກ່ຽວຂ້ອງໃຫ້ກອງທຶນໂລກ.
3. ລາຍງານຜົນຂອງການລົງຕິດຕາມຊຸກຍູ້ການປະຕິບັດວຽກງານຢູ່ແຂວງຫຼວງພະບາງ ລະຫວ່າງວັນທີ 26-29 ມິຖຸນາ 2018:
   - ທາງກອງປະຊຸມໄດ້ເຫັນດີເປັນເອກະພາບກັບບົດລາຍງານການລົງຕິດຕາມຊຸກຍູ້ວຽກງານໂຄງການໂລກເອດ, ວັນນະໂຣກ ແລະ ໄຂ້ຍຸງ ທີ່ແຂວງຫຼວງພະບາງ;
   - ຕໍ່ກັບບັນຫາທີ່ທາງໂຮງໝໍແຂວງຫຼວງພະບາງໄດ້ສະເໜີຂໍພະນັກງານແພດໝໍຊ່ຽວຊານປະຈຳນິຕິເວດ ແລະ ພະນັກງານວິເຄາະນັ້ນ ທ່ານປະທານທີ່ປະຊຸມໄດ້ເຫັນດີນຳຂໍ້ສະເໜີຂອງທີມງານຕິດຕາມກວດກາຊຸກຍູ້ທີ່ໄດ້ແນະນຳທາງໂຮງໝໍໃຫ້ໝູນໃຊ້ພະນັກງານແພດໝໍທີ່ມີຢູ່, ໃຫ້ຍົກລະດັບໃຫ້ພະນັກງານຜູ້ທີ່ຍັງບໍ່ທັນມີຄວາມອາດສາມາດຕື່ມ, ມອບໝາຍໃຫ້ພະນັກງານເຮັດວຽກຫຼາຍໜ້າທີ່ ແລະ ນຳໃຊ້ພະນັກງານບຳນານຜູ້ທີ່ຍັງມີສຸຂະພາບແຂງແຮງ ແລະ ມີຄວາມອາດສາມາດ ເຂົ້າມາຮັບໃຊ້ວຽກງານ.

4. ສະເໜີຄວາມຄືບໜ້າ ແລະ ບັນຫາ ທີ່ສຳຄັນກ່ຽວກັບວຽກງານການບໍລິຫານຄຸ້ມຄອງໂຄງການ ໂດຍສະເພາະກົນໄກການໄຫຼວຽນຂອງເງິນຊ່ວຍເຫຼືອ ແລະ ຂັ້ນຕອນການຍົກເວັ້ນພາສີ:
   - ທາງກອງທຶນໂລກສະເໜີໃຫ້ທາງກະຊວງສາທາລະນະສຸກໃຫ້ລາຍລະອຽດກ່ຽວກັບການທ້າງຫາກະກຽມທາງດ້ານບັນຊີທະນາຄານໃໝ່ນີ້;
   - ໂຄງການ RAI2E ຈະນຳໃຊ້ກົນໄກການໄຫຼວຽນເງິນຊ່ວຍເຫຼືອແບບເກົ່າ ຈົນກວ່າກົນໄກໃໝ່ໄດ້ຖືກຮັບຮອງໂດຍກອງທຶນໂລກ;
   - ທາງກະຊວງສາທາລະນະສຸກໄດ້ສົນທະນາປຶກສາຫາລື ແລະ ໄດ້ຕົກລົງ ກັບກະຊວງການເງິນແລ້ວ ກ່ຽວກັບກົນໄກການໄຫຼວຽນຂອງເງິນຊ່ວຍເຫຼືອ ໂດຍທາງກະຊວງສາທາລະນະສຸກຈະປະຕິບັດຕາມທິດທາງຂອງກະຊວງການເງິນ;
   - ໃຫ້ທາງ PMU ນຳເອົາທຸກຄຳຄິດເຫັນ ແລະ ຂໍ້ສະເໜີແນະ ກ່ຽວກັບກົນໄກການໄຫຼວຽນຂອງເງິນຊ່ວຍເຫຼືອ ທີ່ຍົກຂຶ້ນໃນກອງປະຊຸມເພື່ອໄປພິຈາລະນາ ແລະ ແກ້ໄຂ.
5. ການຄັດເລືອກເອົາ ຜູ້ຮັບທຶນຮ່ວມພາຍໃນປະເທດ ຂອງທຶນຊ່ວຍເຫຼືອໂຄງການພາກພື້ນອັນນະໂຣກ:
   - ກອງເລຂາ CCM ໄດ້ຮັບຂໍ້ມູນທາງອີເມວຈາກ RCM ໃນວັນທີ 23/07/2018 ເພື່ອໃຫ້ທຳການຄັດເລືອກເອົາຜູ້ຮັບທຶນຮ່ວມພາຍໃນປະເທດພາຍໃນວັນທີ 24/8/2018 ໂດຍທາງ RCM ບໍ່ໄດ້ສົ່ງລາຍລະອຽດ ແລະ ຄຳແນະນຳໃດໆມາໃຫ້ເທື່ອ;
   - ກອງປະຊຸມໄດ້ສະເໜີໃຫ້ໝູນໃຊ້ MOH PR ທີ່ມີຢູ່ ເພາະວ່າບໍ່ມີງົບປະມານດ້ານບໍລິຫານໃຫ້ແກ່ຜູ້ຮັບທຶນຮ່ວມ ແລະ ໄດ້ຕົກລົງເຫັນດີ ໃຫ້ລໍຖ້າເບິ່ງລາຍລະອຽດ ແລະ ຄຳແນະນຳ ຈາກ RCM ແລະ ກອງທຶນໂລກກ່ອນແລ້ວຈຶ່ງຄ່ອຍມາປຶກສາກັນອີກເທື່ອໜຶ່ງ ຊຶ່ງອາດລົງຄະແນນສຽງຜ່ານທາງ Email.
6. ສະເໜີການປະຕິບັດກິດຈະກຳຂອງຄະນະກຳມະການປະສານງານຂອງອົງການຈັດຕັ້ງທາງສັງຄົມ (NPA-KAP-PLWD CC):
   - ເນື່ອງຈາກວ່າເວລາມີບໍ່ພຽງພໍໃນການນຳສະເໜີ ທາງຜູ້ຮັບຜິດຊອບໄດ້ສະເໜີໃຫ້ທາງຜູ້ແທນໄປອ່ານເອກະສານເອງ ແລະ ຖ້າຫາກວ່າມີຄຳຖາມໃດໆ ໃຫ້ຕິດຕໍ່ກັບຫາຜູ້ຮັບຜິດຊອບຕື່ມ.
7. ການຊ່ວຍເຫຼືອດ້ານວິຊາການຈາກ USAID ໂດຍຜ່ານໂຄງການ Health Policy Plus on National Transition Plan and Social Contract:
   - ທາງ USAID ໄດ້ແຈ້ງໃຫ້ຊາບວ່າ ທາງໂຄງການ Health Policy Plus (HP+) ໄດ້ມີທຶນຊ່ວຍກະຊວງສາທາລະນະສຸກ ປະມານ 300,000-350,000 ໂດລາ ໃນການສ້າງແຜນຄວາມຍືນຍົງ ແລະ ການຂ້າມຜ່ານໂດຍນຳໃຊ້ຂໍ້ມູນຈາກການປະເມີນຄວາມກຽມພ້ອມໃນການຂ້າມຜ່ານຂອງກອງທຶນໂລກ;
   - ສ່ວນລາຍລະອຽດອຽດຈະໄດ້ປຶກສາຫາລືກັນຕື່ມອີກກັບພາກສ່ວນທີ່ກ່ຽວຂ້ອງພາຍໃນທ້າຍເດືອນ ສິງຫາ.

ກອງປະຊຸມດັ່ງກ່າວນີ້ ໄດ້ສິ້ນສຸດລົງໃນເວລາ 17:15 ຂອງວັນທີ 26 ກໍລະກົດ 2018.

ນະຄອນຫຼວງວຽງຈັນ, ວັນທີ 10 AUG 2018

ປະທານກອງປະຊຸມ

ທ່ານ ຮສ. ດຣ. ພູທອນ ເມືອງປາກ

ຜູ້ສັງລວມເນື້ອໃນກອງປະຊຸມ

ທ່ານ ໜູກອນ ທະລັງສີ